# ບາງແນວທາງ ໃນການລົງທຶນໃນຮຸ້ນ

ຫຼາຍທ່ານ ຄືຊິຮູ້ແລ້ວວ່າ ຕະຫຼາດຫຼັກຊັບລາວ ເປີດຕົວແລ້ວໃນຕົ້ນປີ 2011 ທີ່ຜ່ານມາ. ນັບແຕ່ມື້ນັ້ນເປັນຕົ້ນມາ ຮອດມືນີ້ ກໍໄດ້ມີນັກລົງທຶນຈຳນວນບໍ່ໜ້ອຍ ບໍ່ວ່າຈະເປັນຄົນລາວ ຫຼື ຄົນຕ່າງປະເທດ ເຂົ້າມາລົງທຶນແລກປ່ຽນຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ. ເຖິງຢ່າງໃດກໍຕາມ, ສຳລັບຄົນລາວເຮົາແລ້ວ ເຖິງຈະຜ່ານມາໄດ້ປີກວ່າແລ້ວ ການລົງທຶນໃນຮຸ້ນ ກໍຍັງຖືວ່າເປັນເລື້ອງໃໝ່ ຊຶ່ງຍັງຕ້ອງໃຊ້ເວລາອີກພໍສົມຄວນ ຈຶ່ງຈະມີຄວາມເຂົ້າໃຈກ່ຽວກັບການລົງທຶນປະເພດດັ່ງກ່າວ ໄດ້ຢ່າງທ່ອງແທ້. ດັ່ງນັ້ນ, ໃນບົດຄວາມສະບັບນີ້, ຂ້າພະເຈົ້າ ຈຶ່ງຂໍຍົກບາງແນວທາງໃນການລົງທຶນໃນຮຸ້ນ ເພື່ອມາແລກປ່ຽນກັບບັນດາທ່ານນັກລົງທຶນ ໂດຍສະເພາະນັກລົງທຶນມືໃໝ່ ດັ່ງມີເນື້ອໃນລຸ່ມນີ້:




1. ທ່ານຕ້ອງໝັ່ນສຶກສາຫາຄວາມຮູ້ ກ່ຽວກັບການລົງທຶນຢ່າງຕໍ່ເນື່ອງ ໂດຍການຊອກຮູ້ ແລະອ່ານກ່ຽວກັບຮຸ້ນ ແລະຕະຫຼາດຫຼັກຊັບ, ເຂົ້າຮ່ວມຮັບຟັງການສຳມະນາ ຫຼືຝຶກອົບຮົມ ກ່ຽວກັບການລົງທຶນໃນຮຸ້ນ ແລະເຂົ້າເບິ່ງເວັບໄຊຕ່າງໆ ທີ່ກ່ຽວຂ້ອງ. ທ່ານຕ້ອງສຶກສາແນວທາງຕ່າງໆ ໃນການລົງທຶນ ຊຶ່ງຈະເຮັດໃຫ້ທ່ານເຫັນທັງຂໍ້ດີ ແລະຂໍ້ດ້ອຍ ແລະສາມາດເບິ່ງເຫັນຫຼັກການທີ່ເໝາະສົມກັບຕົນເອງ
2. ກຳນົດເປົ້າໝາຍທາງການເງິນ ແລະວາງແຜນການລົງທຶນຂອງທ່ານ ໃຫ້ຊັດເຈນ.
3. ສຶກສາຂໍ້ມູນຂອງຮຸ້ນແຕ່ລະຕົວ ໂດຍການອ່ານບົດລາຍງານປະຈຳໄຕມາ, ປະຈຳປີຂອງບໍລິສັດຈົດທະບຽນ (ບໍລິສັດທີ່ຂາຍຮຸ້ນ) ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ນຳຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ບໍລິສັດຈົດທະບຽນ ແລະອື່ນໆ.
4. ຈົ່ງລົງທຶນໃນຮຸ້ນທີ່ທ່ານຮູ້ດີ ແລະມີຄວາມໝັ້ນໃຈ.
5. ກະຈາຍການລົງທຶນຂອງທ່ານ ໂດຍຫຼີກລ່ຽງການລົງທຶນໃສ່ຮຸ້ນຕົວໃດຕົວໜຶ່ງ ຫຼືຂະແໜງທຸລະກິດໃດທຸລະກິດໜຶ່ງເທົ່ານັ້ນ.
6. ຂໍຄຳປຶກສານຳນາຍໜ້າຊື້-ຂາຍຫຼັກຊັບຂອງທ່ານ ກ່ຽວກັບການລົງທຶນ
7. ເລືອກຊື້ຮຸ້ນທີ່ທ່ານຄິດວ່າ ຊື້ແລ້ວບໍ່ໜັກໃຈທີ່ຈະຖືໄວ້ຍາວໆ. ພະຍາຍາມຢັບຢັ້ງຄວາມຄິດທີ່ວ່າ ຈະຕ້ອງຂາຍຮຸ້ນນັ້ນອອກ ໃນລາຄາຖືກໆ ເວລາທີ່ລາຄາຮຸ້ນຕົວນັ້ນຕົກ. ຈົ່ງໃຫ້ໂອກາດກັບຮຸ້ນດັ່ງກ່າວ.
8. ຍາດເວລາຕິດຕາມການລົງທຶນ. ບໍ່ມີການລົງທຶນໃນກິດຈະການໃດ ທີ່ທ່ານລົງທຶນໄປແລ້ວ ບໍ່ຕ້ອງຕິດຕາມ ແລ້ວທ່ານຈະໄດ້ຜົນຕອບແທນຕາມທີ່ຄາດຫວັງໄວ້ສະເໝີ. ທ່ານຕ້ອງໃຫ້ເວລາໃນການລົງທຶນ ຄືກັບທ່ານເປັນຜູ້ດຳເນີນກິດຈະການດ້ວຍຕົວຂອງທ່ານເອງ.

**ສິ່ງທີ່ຄວນ ແລະບໍ່ຄວນໃນການລົງທຶນໃນຮຸ້ນ:**




☞ **ສິ່ງທີ່ຄວນ:**

- ຄວນລົງທຶນຢ່າງມີຄວາມຮູ້ ເພາະຄວາມບໍ່ຮູ້ ຄືຄວາມສ່ຽງ
- ຄວນພິຈາລະນາຜົນຕອບແທນ ແລະຄວາມສ່ຽງຄຽງຄູ່ກັນໄປສະເໝີ
- ຄວນຫາມູນຄ່າທີ່ແທ້ຈິງຂອງຮຸ້ນ ໂດຍອາດນຳໃຊ້ອັດຕາສ່ວນລາຄາຕະຫຼາດຂອງຮຸ້ນ ຕໍ່ກຳໄລຕໍ່ຮຸ້ນ ຫຼື ເອີ້ນວ່າ ຄ່າ P/E ຊຶ່ງທ່ານສາມາດຫາໄດ້ນຳບົດວິເຄາະຮຸ້ນທີ່ບໍລິສັດຫຼັກຊັບ ເປັນຜູ້ສ້າງຂຶ້ນ ແລ້ວນຳໄປປຽບທຽບກັບມາດຕະຖານຂອງອຸດສາຫະກຳທີ່ກ່ຽວຂ້ອງກັບຮຸ້ນດັ່ງກ່າວ ກ່ອນທີ່ຈະຕັດສິນໃຈຊື້ ຫຼືຂາຍ.
- ຄວນຕັດສິນໃຈລົງທຶນຢ່າງສົມດູນ: ບໍ່ໂລບມາກໂລພາ ແລະບໍ່ປະໝາດເກີນໄປ. ໃນເວລາດຽວກັນ ກໍ່ບໍ່ໃຫ້ຢ້ານເກີນໄປ.

☞ **ສິ່ງທີ່ບໍ່ຄວນ:**

- ຢ່າລົງທຶນຕາມກະແສ. ການລົງທຶນຕ້ອງວິເຄາະຂໍ້ມູນຮອບດ້ານ. ບໍ່ຄວນເຊື່ອຂ່າວລື ແລ້ວລົງທຶນຕາມ.
- ຢ່າຕື່ນຕົກໃຈໄປຕາມການຂຶ້ນໆລົງໆຂອງລາຄາຮຸ້ນໃນໄລຍະສັ້ນ, ແຕ່ຄວນຕັດສິນໃຈລົງທຶນຕາມປັດໃຈພື້ນຖານທີ່ແທ້ຈິງຂອງຕົວຮຸ້ນ ແລະພາວະເສດຖະກິດ.
- ຢ່າຍຶດຕິດກັບອະດີດ. ການລົງທຶນເປັນການຄາດການໃນອະນາຄົດ ໂດຍອາໃສຂໍ້ມູນໃນອະດີດ ແລະປັດຈຸບັນ ບໍ່ແມ່ນການລົງທຶນຕາມອະດີດ ເພາະສະພາບແວດລ້ອມປ່ຽນແປງຕະຫຼອດເວລາ
- ທ່ານຢ່າຄິດວ່າ ທ່ານນຳເງິນຂອງທ່ານ ລົງທຶນໃນມື້ນີ້ ແລ້ວທ່ານຈະກາຍເປັນເສດຖີໃນເດືອນໜ້າ. ການລົງທຶນ ຕ້ອງເບິ່ງໄປຍາວໆ.

ຫວັງວ່າ ບັນດາທ່ານຄົງຈະນຳເອົາແນວທາງທີ່ກ່າວມາຂ້າງເທິງນີ້ ໄປພິຈາລະນາ ເວລາທີ່ທ່ານລົງທຶນໃນຮຸ້ນ. ການລົງທຶນໃດໆກໍຕາມ ລ້ວນແຕ່ມີຄວາມສ່ຽງ ຜູ້ລົງທຶນຕ້ອງສຶກສາຂໍ້ມູນທີ່ກ່ຽວຂ້ອງເສຍກ່ອນ ແລ້ວຈຶ່ງຕັດສິນໃຈລົງທຶນ.

ດຣ. ເທບສະຫວັນ ກິຕິຍະວົງ, ບໍລິສັດຫຼັກຊັບ BCEL-KT